ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ລາວຊຳຊຸງ ມອບໂທລະພາບມູນຄ່າ 260 ລ້ານກີບໃຫ້ ສທຄ



ບໍລິສັດ ລາວຊຳຊຸງອີເລັກໂທຣນິກ ຈຳກັດຜູ້ດຽວ ມອບໂທລະພາບ Samsung ຈຳນວນ 5 ໜ່ວຍ ໃຫ້ກັບສະຖາບັນການທະນາຄານ (ສທຄ) ເພື່ອນຳໃຊ້ເຂົ້າໃນວຽກງານພັດທະນາການສຶກສາໃນຂົງເຂດການຮຽນ - ການສອນ ຂອງ ສທຄ ລວມມູນຄ່າທັງໝົດ 260.000.000 ກີບ ແລະ ພິທີມອບ - ຮັບ ໄດ້ຈັດຂຶ້ນໃນວັນທີ 9 ມິຖຸນາ 2020 ທີ່ ສທຄ ໂດຍຕາງໜ້າມອບຂອງທ່ານນາງ ມັງກອນທອງ ໄຊຍະສິດ ການຕະຫຼາດຜະລິດຕະພັນເຄື່ອງໃຊ້ໄຟຟ້າ ແລະ ຕາງໜ້າ ສທຄ ຮັບໂດຍ ທ່ານ ປອ. ນາງ ດ່ຽງຄຳ ແສງແກ້ວມີໄຊ ຮອງຫົວໜ້າ ສທຄ ພ້ອມດ້ວຍພະນັກງານຂອງ 2 ພາກສ່ວນ.

ທ່ານ ປອ. ນາງ ດ່ຽງຄຳ ແສງແກ້ວມີໄຊ ໄດ້ສະແດງຄວາມຮູ້ບຸນຄຸນມາຍັງບໍລິສັດດັ່ງກ່າວທີ່ໄດ້ເຫັນຄວາມສຳຄັນຂອງການພັດທະນາການສຶກສາ ທີ່ສາມາດເປັນເຄື່ອງມືອຳນວຍຄວາມສະດວກໃນການຮຽນ-ການສອນຂອງຄູອາຈານ ແລະ ນັກສຶກສາຂອງສະຖາບັນ ແລະ ເປັນການຍົກລະດັບເທັກໂນໂລຊີເຂົ້າໃນຫຼັກສູດການຮຽນການສອນໃຫ້ທັນສະໄໝຂຶ້ນ ຊຶ່ງໂທລະພາບດັ່ງກ່າວຈະຕິດຕັ້ງໄວ້ດ້ານໜ້າສະໂມສອນໃຫຍ່ 1 ໜ່ວຍ, ຫ້ອງສະໝຸດ 1 ໜ່ວຍ, ທະນາຄານຈຳລອງ 1 ໜ່ວຍ, ຫ້ອງຂ່າວສານ 1 ໜ່ວຍ ແລະ ຫ້ອງປະຊຸມຂອງຄະນະບໍລິຫານງານ 1 ໜ່ວຍ.

ທ່ານ ວິໄລຄຳ ປ້ອງພິມຄຳ ຮອງຫົວໜ້າ ສທຄ ໄດ້ຢືນຢັນວ່າ: ການຊ່ວຍເຫຼືອຂອງບໍລິສັດດັ່ງກ່າວໃນຄັ້ງນີ້ ເປັນນິມິດໝາຍທີ່ດີ ຊຶ່ງຈະກາຍເປັນສື່ກາງໃນການຖ່າຍທອດ ແລະ ນຳສະເໜີວຽກງານຕ່າງໆຂອງ ສທຄ ທີ່ຈະນຳຮູບພາບ, ບັນດາຂໍ້ມູນ ທີ່ຈະສ່ອງແສງລະຫວ່າງຄະນະຜູ້ບໍລິຫານ, ຄູອາຈານ ແລະ ນັກສຶກສາຮູ້ທັນເຫດການ ທັງເປັນການປະຊາສຳພັນບັນຫາການຮຽນ - ການສອນແບບໃໝ່ໃນເງື່ອນໄຂທີ່ປະເທດເຮົາ ກໍ່ຄື ສທຄ ຮັບການພັດທະນາຫຼັງໂຄວິດ - 19, ການສອບເສັງ, ການຝຶກອົບຮົມ; ນອກນີ້, ຍັງຈະໄດ້ນຳໃຊ້ເຂົ້າໃນຫ້ອງສະໝຸດ ເພື່ອຊອກຫາຂໍ້ມູນ, ຊອກຫາບົດຄົ້ນຄ້ວາ ແລະ ບັນຫາຕ່າງທີ່ຕິດພັນກັບການສຶກສາຂອງນັກສຶກສາໄດ້ຢ່າງວ່ອງໄວ; ຂະນະດຽວກັນ, ສທຄ ຍັງກຳລັງພັດທະນາໜ່ວຍງານທີ່ເຮັດໜ້າທີ່ຂໍ້ມູນຂ່າວສານ, ພັດທະນາການຮຽນ - ການສອນ, ຕັດຕໍ່ຮູບ, ອອກແບບ. ການສະໜັບສະໜູນຂອງບໍລິສັດດັ່ງກ່າວຕໍ່ ສທຄ ເປັນການປະກອບສ່ວນສ້າງຄຸນປະໂຫຍດອັນລວມ ບໍ່ສະເພາະແຕ່ອົງກອນ ແຕ່ຍັງສ້າງເງື່ອນໄຂໃຫ້ຄູອາຈານ ແລະ ນັກສຶກສາ ໄດ້ຊົມໃຊ້ເຄື່ອງດັ່ງກ່າວເຂົ້າໃນການພັດທະນາວຽກງານຂອງຕົນໃຫ້ກ້າວໜ້າຢ່າງບໍ່ຢຸດຢັ້ງ.

**# ຂ່າວ-ພາບ: ຮັດສະໝີ ດວງສັດຈະ**